# ບົດສະຫຼຸບຫຍໍ້ການຈັດຕັ້ງປະຕິບັດການຄຸ້ມຄອງ ອາວຸດຂະໜາດນ້ອຍ ແລະ ເບົາ

**MOSAIC 03.40**

ສະບັບ: 1.0
2014-06-17

## ກົນໄກການປະສານງານແຫ່ງຊາດ ວ່າດ້ວຍການຄຸ້ມຄອງອາວຸດຂະໜາດ ນ້ອຍ ແລະ ເບົາ

The Modular Small-arms-control Implementation Compendium
MOSAIC
Good practices for safer societies.

ເລກທີເພື່ອອ້າງອີງ
MOSAIC 03.40:2014(E)V1.0

© United Nations 2018

ເອກະສານສະບັບນີ້ ອາດບໍ່ແມ່ນສະບັບປັງປຸງຫຼ້າສຸດ.
ໂມດູລ ການຈັດຕັ້ງປົຕິບັດການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ (ໂມສາອິກ) ສະບັບປັບປຸງຫຼ້າສຸດ ແມ່ນສາມາດເຂົ້າເຖິງໄດ້ ໃນເວັບໄຊ:
**www.un.org/disarmament/salw**

ACKNOWLEDGEMENTS

This document — one in a series, comprising the Modular Small-arms-control Implementation Compendium (MOSAIC) — was produced by the United Nations in collaboration with a broad and diverse group of experts drawn from governments, international and regional organizations, civil society and the private sector. A full list of contributors to the MOSAIC project is available on our website.

The production of MOSAIC was made possible by the financial support of the governments of Australia, Canada, Germany, Ireland, Norway and Switzerland, as well as by the United Nations Development Programme (UNDP), the United Nations Office for Disarmament Affairs (UNODA), the United Nations Children's Fund (UNICEF) and the United Nations Counter-Terrorism Committee Executive Directorate (CTED).

© United Nations 2018

All rights reserved. This publication may be reproduced for non-profit educational and training purposes without special permission from the copyright holders, provided that the source is acknowledged. The United Nations would appreciate receiving an electronic copy of any publication that uses this document as a source (conventionalarms-unoda@un.org).

This document is not to be sold.

**ສາລະບານ** ໜ້າ


**ຄຳນຳ** iv

**ຄຳແນະນຳ** vi

1 **ຂອບເຂດ**……………………………………………………………………………….1

2 **ເອກະສານອ້າງອີງພື້ນຖານ**…………………………………………………………………1

3 **ຂໍ້ກຳນົດ ແລະ ຄຳນິຍາມ**…………………………………………………………………..1

4 **ຂອບການຮ່ວມມືສະຫະປະຊາຊາດ**……………………………………………………….2

4.1 ພາກທົ່ວໄປ……………………………………………………………………………….2

4.2 ແຜນປະຕິບັດງານສະຫະປະຊາຊາດ……………………………………………………..2

4.3 ນິຕິກຳ ວ່າດ້ວຍການຕິດຕາມກວດກາ……………………………………………………..2

4.4 ອານຸສັນຍາ ວ່າດ້ວນອາວຸດປືນ…………………………………………………………….2

4.5 ສົນທິສັນຍາ ວ່າດ້ວຍການຄ້າອາວຸດ……………………………………………………….3

5 **ຄະນະກຳມະການແຫ່ງຊາດ**……………………………………………………………….3

5.1 ພາກທົ່ວໄປ…………………………………………………………………………….3

5.2 ບົດບາດ…………………………………………………………………………………3

6 **ຈຸດປະສານງານແຫ່ງຊາດ**…………………………………………………………………3

6.1 ພາກທົ່ວໄປ……………………………………………………………………………..3

6.2 ບົດບາດ…………………………………………………………………………………4

6.3 ລາຍລະອຽດການຕິດຕໍ່……………………………………………………………………4

7 **ກົນໄກການປະສານງານແຫ່ງຊາດ**…………………………………………………………5

7.1 ພາກທົ່ວໄປ……………………………………………………………………………..5

7.2 ບົດບາດ…………………………………………………………………………………5

7.3 ໜ້າທີ່……………………………………………………………………………………5

7.4 ໂຄງສ້າງ/ອົງປະກອບ………………………………………………………………………8

8 **ໂຄງຮ່າງ ແລະ ການບໍລິຫານຈັດການ**………………………………………………………8

9 **ຂົງເຂດ-ໜ້າທີ່ຄວາມຮັບຜິດຊອບຂອງພາກລັດ**……………………………………………9

10 **ແຜນປະຕິບັດງານແຫ່ງຊາດ ແລະ ຂະບວນການອື່ນໆທີ່ກ່ຽວຂ້ອງ**………………………….9

11 **ບົດບາດພິເສດຂອງອົງການຈັດຕັ້ງພາກພື້ນ ແລະ ອົງການສະຫະປະຊາຊາດ**……………………12

ເອກະສານອ້າງອີງ…………………………………………………………………………..13

# ຄຳນຳ

**ໂມສາອິກ (MOSAIC) ແມ່ນຫຍັງ?**

ໂມສາອິກ (MOSAIC) ແມ່ນຂະບວນການຫັນວັດຖຸປະສົງຕ່າງໆຂອງບັນດາຂໍ້ຕົກລົງສາກົນທີ່ສຳຄັນ ໃຫ້ເປັນຮູບປະທຳ ໂດຍມີເປົ້າໝາຍສະກັດກັ້ນການຄ້າ, ການສະສົມ ແລະ ນຳໃຊ້ອາວຸດຂະໜາດນ້ອຍ ແລະ ເບົາທີ່ຜິດກົດໝາຍ, ຊຶ່ງບັນດາຂໍ້ຕົກລົງສາກົນດັ່ງກ່າວ ລວມມີ:

- ແຜນປະຕິບັດງານ ວ່າດ້ວຍການຄ້າອາວຸດຂະໜາດນ້ອຍ ແລະ ເບົາທີ່ຜິດກົດໝາຍ
- ນິຕິກຳສາກົນ ວ່າດ້ວນການຕິດຕາມກວດກາ
- ອະນຸສັນຍາ ວ່າດ້ວຍອາວຸດປືນ ທີ່ເສີມສ້າງໃຫ້ແກ່ສົນທິສັນຍາ ສປຊ ວ່າດ້ວຍການຕ້ານອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງ.
- ສັນຍາສາກົນວ່າດ້ວຍການຄ້າອາວຸດ (ATT)

ຫຼັກສູດໂມສາອິກ (MOSAIC) ແມ່ນອີງໃສ່ພາກປະຕິບັດທີ່ດີ, ກົດແຫ່ງການປະພຶດ ແລະ ຂັ້ນຕອນການດຳເນີນງານມາດຕະຖານ ທີ່ໄດ້ຮັບການພັດທະນາໃນລະດັບອະນຸພາກພື້ນ ແລະ ພາກພື້ນ. ຫຼັກສູດດັ່ງກ່າວ ແມ່ນຖືກສ້າງຂຶ້ນໂດຍອົງການສະຫະປະຊາຊາດ (ສປຊ) ແລະ ຈາກການປະກອບສ່ວນຂອງບັນດານັກຊ່ຽວຊານຈາກທົ່ວໂລກ.

ໂມສາອິກ (MOSAIC) ແມ່ນຄູ່ມືໂດຍສະມັກໃຈຢ່າງສົມບູບແບບ.

ໂມສາອິກ (MOSAIC) ຊ່ວຍສະໜັບສະໜູນການບັນລຸເປົ້າໝາຍການພັດທະນາແບບຍືນຍົງ, ລວມທັງເປົ້າໝາຍ 16 ເພື່ອສົ່ງເສີມສັງຄົມທີ່ມີສັນຕິພາບ, ຄວາມຍຸຕິທຳ ແລະ ຄວາມກວມລວມ, ແລະ ຄາດໝາຍ 16.4 ທີ່ປະກອບມີການຫຼຸດຜ່ອນການນຳເຂົ້າ-ສົ່ງອອກອາວຸດທີ່ຜິດກົດໝາຍ.

**ໃຜສ້າງໂມສາອິກ (MOSAIC) ?**

ລັດຖະບານສ່ວນໃຫຍ່ ແມ່ນຮຽກຮ້ອງໃຫ້ອົງການສະຫະປະຊາຊາດ (ສປຊ) ໃຫ້ຄຳແນະນຳ ແລະ ການສະໜັບສະໜູນ ກ່ຽວກັບບັນຫາທີ່ຕິດພັນກັບການຄຸ້ມຄອງອາສຸດຂະໜາດນ້ອຍ ແລະ ເບົາ - ລວມທັງບັນຫາທາງດ້ານນິຕິກຳ, ແຜນປະຕິບັດງານ ແລະ ພາກປະຕິບັດ.

ບັນດາອົງການເຄືອຂ່າຍອົງການສະຫະປະຊາຊາດ (ສປຊ) ໄດ້ເຫັນດີເປັນເອກະພາບກັນວ່າ ວິທີທີ່ດີທີ່ສຸດ ເພື່ອຮັບປະກັນໃຫ້ອົງການສະຫະປະຊາຊາດ ໂດຍລວມ ສາມາດໃຫ້ຄຳແນະນຳ ແລະ ການສະໜັບສະໜູນທີ່ມີຄຸນນະພາບສູງ ແລະ ຢ່າງສະເໝີຕົ້ນສະເໝີປາຍ ຕໍ່ຂໍ້ສະເໜີດັ່ງກ່າວໄດ້ ຄວນແມ່ນການສ້າງລະບຽບການສາກົນ ກ່ຽວກັບການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ ຄ້າຍຄືກັບບັນດາມາດຕະຖານ ທີ່ໄດ້ຮັບການສ້າງຂຶ້ນໂດຍອົງການສະຫະປະຊາຊາດ (ສປຊ) ກ່ຽວກັບການເກັບກູ້ລູກລະເບີດ ((International Mine Action Standards – IMAS)); ການຫຼຸດຜ່ອນອາວຸດ, ການຖອນກຳ ແລະ ການກັບຄືນສູ່ສັງຄົມ (Integrated DDR Standards – IDDRS); ແລະ ລູກປືນ (International Ammunition Technical Guidelines – IATG).

ບົດສະຫຼຸບຫຍໍ້ນີ້ ແມ່ນໄດ້ມາຈາກການເຮັດວຽກ ແລະ ການປະສານງານຂອງອົງການສະຫະປະຊາຊາດ (ສປຊ) ເປັນເວລາ 10 ກວ່າປີ, ຊຶ່ງກວມເອົາບັນດາຂະແໜງການຕ່າງໆຂອງຄູ່ຮ່ວມມື ທີ່ມີຄວາມຊ່ຽວຊານໃນຫຼາກຫຼາຍຂົງເຂດ ນັບແຕ່ຂົງເຂດການພັດພັດທະນາ ແລະ ການຄຸ້ມຄອງອາວຸດ ຈົນເຖິງ ການສົ່ງເສີມສິດສະເໝີພາບຍິງ-ຊາຍ ແລະ ສາທາລະນະສຸກ. ນອກນີ້, ຍັງມີການອ້າງອີງຈາກກຸ່ມນັກຊ່ຽວຊານຈາກພາຍນອກ ທີ່ກວມເອົານັກຊ່ຽວຊານສະເພາະດ້ານ ຫຼາຍກວ່າ 300 ຄົນ ຈາກບັນດາອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ແລະ ພາກອຸດສາຫະກຳ ທີ່ໄດ້ປະກອບສ່ວນເຂົ້າໃນຂະບວນການສ້າງຫຼັກສູດ.

**ໃຜສາມາດນຳໃຊ້ ໂມສາອິກ (MOSAIC)?**

ລັດຖະບານ ແລະ ອົງການຈັດຕັ້ງໃດ ກໍສາມາດນຳໃຊ້ໂມສາອິກ (MOSAIC). ການຄຸ້ມຄອງອາວຸດຂະໜາຍນອຍ ແລະ ເບົາ ໂດຍອີງໃສ ໂມສາອິກ (MOSAIC) ຢ່າງຖືກຕ້ອງ ຈະຊ່ວຍຫຼຸດຜ່ອນຄວາມສ່ຽງທີ່ອາວຸດຈະຕົກໄປຢູ່ໃນກຳມືຂອງກຸ່ມກໍ່ອາຊະຍາກຳ, ກຸ່ມຕິດອາວຸດ, ກຸ່ມກໍ່ການຮ້າຍ ແລະ ກຸ່ມອື່ນໆ ທີ່ອາດຈະນຳໃຊ້ອາວຸດໃນທາງທີ່ຜິດ.

**ໂມສາອິກ (MOSAIC) ພາກປະຕິບັດທີ່ດີ ເພື່ອສ້າງສັງຄົມທີ່ປອດໄພ.**


© United Nations 2018 – All rights reserved

# ຄຳແນະນຳ

ການສ້າງ, ການຈັດຕັ້ງປະຕິບັດ ແລະ ການບັງຄັບໃຊ້ກົນໄກການຄຸ້ມຄອງວົງຈອນຊີວິດຂອງອາວຸດຂະໜາດນ້ອຍ ແລະ ເບົາລະດັບຊາດທີ່ມີປະສິດທິພາບ ແມ່ນຈຳເປັນຕ້ອງມີການຮ່ວມມື ແລະ ການປະສານງານ ລະຫວ່າງບັນດາພາກສ່ວນຕ່າງໆ, ລວມທັງຂະແໜງການຂອງພາກລັດ, ອົງການຈັດຕັ້ງພົນລະເຮືອນ, ພາກເອກະຊົນ ແລະ ອົງການຈັດຕັ້ງລະຫວ່າງລັດຖະບານ. ກົນໄກການປະສານງານລະດັບຊາດ ວ່າດ້ວຍການຄຸ້ມຄອງ ອາວຸດຂະໜາດນ້ອຍ ແລະ ເບົາ ສາມາດຮັບປະກັນໃຫ້ທຸກພາກສ່ວນກ່ຽວຂ້ອງຂອງລັດຖະບານ ເຮັດວຽກຮ່ວມກັນກັບຄູ່ຮ່ວມມື ໃນລະດັບຊາດ ແລະ ສາກົນ ເພື່ອໃຫ້ມີແນວຄິດລິເລີ່ມ, ຊີ້ນຳ, ຕິດຕາມ ແລະ ປະເມີນບັນດາມາດຕະການຄຸ້ມຄອງອາວຸດຂະໜາດນ້ອຍ ແລະເບົາ.

© United Nations 2018 – All rights reserved

# ກົນໄກການປະສານງານແຫ່ງຊາດ ວ່າດ້ວຍການຄຸ້ມຄອງອາວຸດຂະໜາດ ນ້ອຍ ແລະ ເບົາ

## 1 ຂອບເຂດ

ເອກະສານສະບັບນີ້ ໃຫ້ຄຳແນະນຳ ກ່ຽວກັບການສ້າງຕັ້ງ ແລະ ໜ້າທີ່ຂອງກົນໄກການປະສານງານແຫ່ງຊາດ ວ່າດ້ວຍການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ ທີ່ກວມເອົາຫຼາຍຂົງເຂດວຽກງານ.

ບັນດາລັດຖະບານຕ່າງໆ ທີ່ມີຄວາມປະສົງຢາກສ້າງຕັ້ງກົນໄກ, ລວມທັງບັນດາລັດຖະບານຕ່າງໆ ທີ່ມີຄວາມປະສົງຢາກປະເມີນໂຄງສ້າງ/ອົງປະກອບ ແລະ ການດຳເນີນງານຂອງກົນໄກການປະສານງານທີ່ມີຢູ່ແລ້ວ ໂດຍສົມທຽບໃສ່ມາດຕະຖານສາກົນ ສາມາດໝູນໃຊ້ເອກະສານສະບັບນີ້.

ເອກະສານສະບັບນີ້ ຈະເປັນປະໂຫຍດໃຫ້ແກ່ບັນດາອົງການເຄືອຂ່າຍອົງການສະຫະປະຊາຊາດ (ສປຊ) ແລະ ບັນດາຄູ່ຮ່ວມມືສາກົນ ໃນການໃຫ້ຄຳແນະນຳ ແລະ ຊ່ວຍເຫຼືອລັດຖະບານຕ່າງໆ ເພື່ອສ້າງຕັ້ງກົນໄກການປະສານງານແຫ່ງຊາດ ວ່າດ້ວຍການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ.

## 2 ເອກະສານອ້າງອີງພື້ນຖານ

ບັນດາເອກະສານອ້າງອີງຕໍ່ໄປນີ້ ແມ່ນມີຄວາມສຳຄັນ ແລະ ມີຄວາມຈຳເປັນໃນການຈັດຕັ້ງປະຕິບັດເອກະສານສະບັບນີ້. ສຳລັບເອກະສານອ້າງອີງທີ່ມີເລກທີ ແມ່ນນຳໃຊ້ເອກະສານສະບັບຈັດພິມ ທີ່ມີການອ້າງເຖິງເທົ່ານັ້ນ. ສຳລັບເອກະສານອ້າງອີງທີ່ບໍ່ມີເລກທີ ແມ່ນນຳໃຊ້ເອກະສານສະບັບຈັດພິມຫຼ້າສຸດ (ລວມທັງສະບັບປັບປຸງ).

ໂມສາອິກ (MOSAIC) 04.10, *ການອອກແບບ ແລະ ການຈັດຕັ້ງປະຕິບັດແຜນງານງານແຫ່ງຊາດ*
ໂມສາອິກ (MOSAIC) 04.20, *ການອອກແບບ ແລະ ຈັການດຕັ້ງປະຕິບັດໂຄງການຄວາມປອດໄພຂອງຊຸມຊົນ*
ໂມສາອິກ (MOSAIC) 04.10, *ການສົ່ງເສີມຄວາມເຂົ້າໃຈ ກ່ຽວກັບຄວາມຈຳເປັນໃນການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ*
ໂມສາອິກ (MOSAIC) 04.10, *ການຕິດຕາມ, ການປະເມີນ ແລະ ການລາຍງານ*

## 3 ຂໍ້ກຳນົດ ແລະ ຄຳນິຍາມ

ເພື່ອຈຸດປະສົງຂອງເອກະສານສະບັບນີ້, ບັນດາຂໍ້ກຳນົດ ແລະ ຄຳນິຍາມ ໃນເອກະສານສະບັບເລກທີ ໂມສາອິກ (MOSAIC) 01.20, *ຄຳສັບ ແລະ ຄຳນິຍາມ, ແລະ ຂໍ້ກຳນົດລຸ່ມນີ້ ແມ່ນໃຊ້ປະຕິບັດຕໍ່ເອກະສານສະບັບນີ້:*

ໃນທຸກຫຼັກສູດຂອງໂມສາອິກ (MOSAIC), ຄຳສັບ “ຕ້ອງ” “ຄວນ” “ອາດສາມາດ” ແລະ “ສາມາດ” ແມ່ນຖືກນຳໃຊ້ ເພື່ອກຳນົດຂໍ້ບັງຄັບ ໂດຍສອດຄ່ອງກັບການໃຊ້ຄຳສັບໃນລະບົບມາດຕະຖານຂອງອົງການຈັດຕັ້ງສາກົນ ວ່າດ້ວຍມາດຕະຖານ (ISO).

ກ.) **ຄຳວ່າ “ຕ້ອງ” ຊີ້ບອກເຖິງຄວາມຈຳເປັນ:** ເປັນການໃຊ້ຄຳສັບ ເພື່ອຊີ້ບອກເຖິງຄວາມຈຳເປັນໃນການຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ ເພື່ອຮັບປະກັນຄວາມສອດຄ່ອງກັບເອກະສານ ແລະ ບໍ່ອະນຸຍາດໃຫ້ໃຫ້ມີການຝ່າຝືນ.

ຂ.) **ຄຳວ່າ “ຄວນ” ຊີ້ບອກເຖິງຂໍ້ສະເໜີແນະ:** ເປັນການໃຊ້ຄຳສັບ ເພື່ອຊີ້ບອກເຖິງຂໍ້ສະເໜີແນະ ໂດຍສະເພາະແມ່ນຂໍ້ສະເໜີແນະທີ່ເໝາະສົມ ໃນບັນດາຂໍ້ເໜີຕ່າງໆທີ່ມີຄວາມເປັນໄປໄດ້, ໂດຍບໍ່ມີການເຈາະຈົງ ແລະ ຍົກເວັ້ນຂໍ້ສະເໜີແນະອື່ນໆ, ຫຼື ພາກການປະຕິບັດໃດໜຶ່ງ ທີ່ມີຄວາມເໝາະສົມກວ່າ ແຕ່ບໍ່ມີຄວາມຈຳເປັນ, ຫຼື (ການໃຊ້ຄຳສັບໃນລັກສະນະປະຕິເສດ) “ບໍ່ຄວນ” ໃນກໍລະນີມີຄວາມເປັນໄປໄດ້ ຫຼື ພາກການປະຕິບັດໃດໜຶ່ງ ທີ່ບໍ່ໄດ້ຮັບການຮັບຮອງ ແຕ່ບໍ່ໄດ້ຖືກຫວງຫ້າມ.

ຄ.) **ຄຳວ່າ “ສາມາດ” ຊີ້ບອກເຖິງການອະນຸຍາດ:** ເປັນການໃຊ້ຄຳສັບ ເພື່ອຊີ້ບອກເຖິງພາກການປະຕິບັດທີ່ໄດ້ຮັບການອະນຸຍາດ ພາຍໃຕ້ຂອບຈຳກັດຂອງເອກະສານ.

© United Nations 2018 – All rights reserved

ງ.) **ຄຳວ່າ "ສາມາດເຮັດໄດ້" ຊີ້ບອກເຖິງຄວາມເປັນໄປໄດ້ ແລະ ຄວາມສາມາດ:** ເປັນການນຳໃຊ້ຄຳສັບ ເພື່ອເປັນການຢືນຢັນເຖິງຄວາມເປັນໄປໄດ້ ແລະ ຄວາມສາມາດ, ບໍ່ວ່າຈະແມ່ນໃນລັກສະນະທີ່ເປັນຮູບປະທຳ, ທາງກາຍະພາບ ຫຼື ແບບບໍ່ເປັນທາງການ.

# 4 ຂອບການຮ່ວມມືສະຫະປະຊາຊາດ (ສປຊ)

## 4.1 ພາກທົ່ວໄປ

ເອກະສານສະບັບນີ້ ໃຫ້ຄຳແນະນຳ ກ່ຽວກັບຈັດຕັ້ງຜັນຂະຫຍາຍບັນດາຄວາມໝາຍໝັ້ນທີ່ກ່ຽວຂ້ອງກັບກົນໄກການປະສານງານແຫ່ງຊາດ ທີ່ໄດ້ຖືກກຳນົດໄວ້ໃນເອກະສານທາງກົດໝາຍການຮ່ວມມືຫຼາຍຝ່າຍຂອງສະຫະປະຊາຊາດ (ສປຊ) ທີ່ຕິດພັນກັບການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ.

## 4.2 ແຜນປະຕິບັດງານສະຫະປະຊາຊາດ (ສປຊ)

ອີງຕາມແຜນປະຕິບັດງານສະຫະປະຊາຊາດ (ສປຊ) ເພື່ອສະກັດກັ້ນ, ແກ້ໄຂ ແລະ ລຶບລ້າງການຄ້າອາວຸດຂະໜາດນ້ອຍ ແລະ ເບົາທຸກຮູບແບບທີ່ຜິດກົດໝາຍ (ແຜນປະຕິບັດງານ ສປຊ), ທຸກປະເທດສະມາຊິກ ສປຊ ມີຄວາມໝາຍໝັ້ນໃນການ:

ກ.) ຮັດແໜ້ນ ຫຼື ສ້າງບັນດາລະບຽບການ ແລະ ມາດຕະການທີ່ໄດ້ຕົກລົງກັນໃນລະດັບຊາດ, ຊຶ່ງຈະເປັນການເສີມສ້າງ ແລະ ສືບຕໍ່ປະສານຄວາມພະຍາຍາມ ແນໃສ່ສະກັດກັ້ນ, ແກ້ໄຂ ແລະ ລຶບລ້າງການຄ້າອາວຸດຂະໜາດນ້ອຍ ແລະ ເບົາໃນທຸກຮູບແບບທີ່ຜິດກົດໝາຍ **(ພາກທີ I, ວັກທີ 22.a)**;

ຂ.) ສ້າງຕັ້ງ, ຫຼື ແຕ່ງຕັ້ງ *ອີງຕາມຄວາມເໝາະສົມ* ອົງກອນ ຫຼື ຂະແໜງການປະສານງານແຫ່ງຊາດ ແລະ ສະຖາບັນ ທີ່ຮັບຜິດຊອບວຽກງານໃນການໃຫ້ຄຳແນະນຳທາງດ້ານນະໂຍບາຍ, ການຄົ້ນຄ້ວາ ແລະ ການຕິດຕາມຄວາມພະຍາຍາມ ໃນການສະກັດກັ້ນ, ແກ້ໄຂ ແລະ ລຶບລ້າງການຄ້າອາວຸດຂະໜາດນ້ອຍ ແລະ ເບົາໃນທຸກຮູບແບບທີ່ຜິດກົດໝາຍ **(ພາກທີ II, ວັກທີ 5)**;

ຄ.) ສ້າງຕັ້ງ ຫຼື ແຕ່ງຕັ້ງ *ອີງຕາມຄວາມເໝາະສົມ* ຈຸດປະສານງານແຫ່ງຊາດ ເພື່ອເຮັດໜ້າທີ່ປະສານງານ ລະຫວ່າງລັດຕ່າງໆ ກ່ຽວກັບບັນຫາທີ່ຕິດພັນກັບການຈັດຕັ້ງປະຕິບັດແຜນປະຕິບັດງານ **(ພາກທີ II, ວັກທີ 5)**; ແລະ

ງ.) ຮັບປະກັນໃຫ້ແກ່ການປະສານງານ, ການເຊື່ອມສານ ແລະ ຄວາມກົມກ່ຽວ ລະຫວ່າງຄວາມພະຍາຍາມຕ່າງໆໃນລະດັບຊາດ ແນໃສ່ແກ້ໄຂບັນຫາການຄ້າອາວຸດຂະໜາດນ້ອຍ ແລະ ເບົາໃນທຸກຮູບແບບທີ່ຜິດກົດໝາຍ ແລະ ເພື່ອຊຸກຍູ້ການສ້າງຕັ້ງ ແລະ ຮັດແໜ້ນ ການຮ່ວມມື ແລະ ການມີສ່ວນຮ່ວມໃນທຸກລະດັບ ລະຫວ່າງອົງການຈັດຕັ້ງສາກົນ, ອົງການຈັດຕັ້ງລະຫວ່າງລັດ ແລະ ອົງການ ຈັດຕັ້ງພົນລະເຮືອນ, ລວມທັງອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດ ແລະ ສະຖາບັນການເງິນສາກົນ **(ພາກທີ III, ວັກທີ 2).**

## 4.3 ນິຕິກຳສາກົນ ວ່າດ້ວຍການຕິດຕາມກວດກາອາວຸດ

ອີງຕາມນິຕິກຳສາກົນ ວ່າດ້ວຍການຕິດຕາມກວດກາອາວຸດ, ທຸກປະເທດສະມາຊິກ ສປຊ ມີຄວາມໝາຍໝັ້ນໃນການ:

ກ.) ແຕ່ງຕັ້ງ 01 ຫຼື ຫຼາຍກວ່າ 01 ຈຸດປະສານງານງານແຫ່ງຊາດ ເພື່ອແລກປ່ຽນຂໍ້ມູນ ແລະ ເຮັດໜ້າທີ່ເປັນຜູ້ປະສານງານ ກ່ຽວກັບບັນຫາທີ່ຕິດພັນກັບການຈັດຕັ້ງປະຕິບັດນິຕິກຳສາກົນວ່າດ້ວຍການຕິດຕາມກວດກາອາວຸດ (ວັກທີ 25); ແລະ

ຂ.) ສະໜອງ ແລະ ປັບປຸງບັນດາຂໍ້ມູນທີ່ກ່ຽວຂ້ອງ ຖ້າມີຄວາມຈຳເປັນ ໃຫ້ແກ່ເລຂາທິການໃຫຍ່ ຜ່ານກົມການຫຼຸດຜ່ອນອາວຸດຂອງກອງເລຂາ ເຊັ່ນ: (ກ) ຊື່ ແລະ ຂໍ້ມູນຕິດຕໍ່ ສຳລັບຈຸດປະສານງານແຫ່ງຊາດ (ວັກທີ 31).

## 4.4 ອານຸສັນຍາ ວ່າດ້ວຍການຄຸ້ມຄອງອາວຸດປືນ

*ອານຸສັນຍາ ວ່າດ້ວຍການຕ້ານການຜະລິດ ແລະ ການຄ້າຂາຍອາວຸດປືນ, ຊິ້ນສ່ວນ ແລະ ສ່ວນປະກອບ ແລະ ລູກປືນທີ່ຜິດກົດໝາຍ*, ທີ່ເສີມສ້າງໃຫ້ແກ່*ສົນທິສັນຍາ ສປຊ ວ່າດ້ວຍການຕ້ານອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງ* (ອານຸສັນຍາ ສປຊ ວ່າດ້ວຍການຕ້ານອາວຸດປືນ), ໄດ້ລະບຸວ່າ ທຸກປະເທດທີ່ເປັນພາຄີ:

 © United Nations 2018 – All rights reserved

ກ.) ຕ້ອງກຳນົດຂະແໜງການແຫ່ງຊາດ ຫຼື ຈຸດປະສານງານ ທີ່ເຮັດໜ້າທີ່ເປັນຜູ້ປະສານງານ ລະຫວ່າງບັນດາຂະແໜງການຂອງຕົນ ແລະ ບັນດາລັດພາຄີອື່ນໆ ກ່ຽວກັບບັນຫາທີ່ຕິດພັນກັບອານຸສັນຍາ (ມາດຕາທີ 13.2)

### 4.5 ສັນຍາ ວ່າດ້ວຍການຄ້າອາວຸດ

ສັນຍາ ວ່າດ້ວຍການຄ້າອາວຸດ ໄດ້ລະບຸວ່າ ທຸກລັດພາຄີ:

ກ.) ຕ້ອງແຕ່ງ 01 ຫຼື ຫຼາຍກວ່າ 01 ຈຸດປະສານງານແຫ່ງຊາດ ເພື່ອແລກປ່ຽນຂໍ້ມູນ ກ່ຽວກັບບັນຫາທີ່ຕິດພັນກັບການຈັດຕັ້ງປະຕິບັດສັນຍາດັ່ງກ່າວ. ທຸກລັດພາຄີ ຕ້ອງແຈ້ງກອງເລຂາ [...] ຂອງບັນດາຈຸດປະສານງານແຫ່ງຊາດ ແລະ ປັບປຸງຂໍ້ມູນ (ມາດຕາທີ 5.6)

## 5 ຄະນະກຳມະການແຫ່ງຊາດ

### 5.1 ພາກທົ່ວໄປ

ບັນດາລັດ ຕ້ອງແຕ່ງຕັ້ງ ຫຼື ສ້າງຕັ້ງຂະແໜງການຂອງພາກລັດ (ເຊັ່ນ: ກະຊວງ, ອົງກອນ ແລະ ອື່ນໆ) ເພື່ອນຳພາວຽກງານການປະສານງານທາງດ້ານການເມືອງ ແລະ ຊີ້ນຳທາງດ້ານນະໂຍບາຍ ໃຫ້ແກ່ຄວາມພະຍາຍາມໃນການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ. ຂະແໜງການດັ່ງກ່າວ ອາດໃຊ້ຊື່ວ່າ ຄະນະກຳມະການແຫ່ງຊາດ ກ່ຽວກັບອາວຸດຂະໜາດນ້ອຍ ແລະ ເບົາ.

### 5.2 ບົດບາດ

ຄະນະກຳມະການແຫ່ງຊາດ ຄວນ

ກ.) ປະສານງານກັບບັນດາສະຖາບັນຂອງພາກລັດ ແລະ ອົງກອນສາກົນ ທີ່ມີສ່ວນຮ່ວມໃນວຽກງານການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ;

ຂ.) ຮັບປະກັນການປະສານງານຂອງແຜນປະຕິບັດງານ ເຊັ່ນ: ຂອບເຂດຂອງແຜນປະຕິບັດງານ, ແນວທາງການເຮັດວຽກທີ່ມີຄວາມກົມກ່ຽວ ແລະ ແບບຮັບຮູ້ຮ່ວມກັນ, ການນຳໃຊ້ມາດຕະຖານທີ່ໄດ້ຕົກລົງເຫັນດີ, ແລະ ອື່ນໆ);

ຄ.) ຊຸກຍູ້ ແລະ ສະໜັບສະໜູນການສະແດງຄວາມຮັບຜິດຊອບ ແລະ ຄວາມໂປ່ງໃສ ແນໃສ່ສ້າງຄວາມເຊື່ອໝັ້ນຂອງທຸກຂະແໜງການ ຕໍ່ກົນໄກການປະສານງານແຫ່ງຊາດ (ຂໍ້ທີ 7);

ງ.) ຮັບປະກັນການສະໜັບສະໜູນຢ່າງຕໍ່ເນື່ອງທາງດ້ານງົບປະມານ ແລະ ເຕັກເນັກ ຈາກແຫຼ່ງການຊ່ວຍເຫຼືອຂອງຊາດ, ພາກພື້ນ ແລະ ສາກົນ; ແລະ

ຈ.) ຮັບການສະໜັບສະໜູນຈາກຂະແໜງການແຜນການ ແລະ ປະສານງານທາງດ້ານເຕັກນິກແຫ່ງຊາດ.

ເນື່ອງຈາກວ່າ ເປົ້າໝາຍຂອງຄະນະກຳມະການແຫ່ງຊາດ ແມ່ນເພື່ອປະສານງານ ແລະ ຊຸກຍູ້ຄວາມພະຍາຍາມໃນລະດັບຊາດ ໃນການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ, ຄະນະກຳມະການດັ່ງກ່າວ ຄວນເປັນຂະແໜງການຂອງພາກລັດ ຫຼື ຂຶ້ນກັບຂະແໜງການຂອງພາກລັດທີ່ມີໜ້າທີ່ໃນການຮັບປະກັນສັນຕິພາບ ແລະ ຄວາມປອດໄພພາຍໃນ.

## 6 ຈຸດປະສານງານແຫ່ງຊາດ

### 6.1 ພາກທົ່ວໄປ

ຈຸດປະສານງານແຫ່ງຊາດ ຕ້ອງໄດ້ຮັບການມອບໝາຍໃຫ້ແລກປ່ຽນຂໍ້ມູນ ແລະ ເຮັດໜ້າທີ່ການປະສານງານ ກ່ຽວກັບທຸກບັນຫາທີ່ຕິດພັນກັບການຈັດຕັ້ງປະຕິບັດບັນດານິຕິກຳສາກົນ ທີ່ໄດ້ກຳນົດໄວ້ໃນຂໍ້ທີ 4.

© United Nations 2018 – All rights reserved 

ເພື່ອຫຼຸດຜ່ອນສິ່ງທ້າທາຍຈາກການປະສານງານ, ອາດມອບໃຫ້ 01 ຈຸດປະງານແຫ່ງຊາດ ຮັບໜ້າທີ່ແລກປ່ຽນຂໍ້ມູນ ແລະ ປະສານງານ ກ່ຽວກັບບັນດານິຕິກຳສາກົນຕ່າງໆ ທີ່ໄດ້ກຳນົດໄວ້ໃນຂໍ້ທີ 4.

ຖ້າມີການແຕ່ງຕັ້ງຫຼາຍກວ່າ 01 ຈຸດປະສານງານ, ບັນດາຈຸດປະສານງານ ຕ້ອງແລກປ່ຽນຂໍ້ມູນ ແລະ ປະສານບັນດາກິດຈະກຳ /ຢ່າງເປັນປົກກະຕິ, ພາຍໃຕ້ການຕິດຕາມຂອງຄະນະກຳມະການແຫ່ງຊາດ.

## 6.2 ບົດບາດ

ຈຸດປະສານງານແຫ່ງຊາດ ແມ່ນບຸກຄົນ ຫຼື ຫ້ອງການ ທີ່ໄດ້ຮັບການແຕ່ງຕັ້ງຢ່າງເປັນທາງການ ພາຍໃນຂະແໜງການຂອງພາກລັດ ທີ່ມີໜ້າທີ່ຮັບຜິດຊອບ ກ່ຽວກັບການປະສານງານ ແລະ ແລກປ່ຽນຂໍ້ມູນກັບບັນດາຂະແໜງການແຫ່ງຊາດທີ່ກ່ຽວຂ້ອງ ກໍຄືບັນດາລັດ, ອົງການເຄືອຂ່າຍສາກົນ, ພາກພື້ນ ແລະ ອານຸພາກພື້ນ ແລະ ອົງການສະຫະປະຊາຊາຊາດ ກ່ຽວກັບບັນຫາທີ່ຕິດພັນກັບການຈັດຕັ້ງປະຕິບັດບັນດານິຕິກຳສາກົນ ທີ່ໄດ້ກຳນົດໄວ້ໃນຂໍ້ທີ 4.

ຈຸດປະສານງານແຫ່ງຊາດ ຄວນ:

ກ.) ເປັນຈຸດປະສານງານຫຼັກໃຫ້ແກ່ທຸກຂະແໜງການ (ລະດັບຊາດ, ພາກພື້ນ ແລະ ສາກົນ) ໃນການຄົ້ນຫາ ຫຼື ສະໜອງຂໍ້ມຸນ, ໃຫ້ການຮ່ວມມື ຫຼື ການຊ່ວຍເຫຼືອ ທີ່ຕິດພັນກັບການຈັດຕັ້ງປະຕິບັດບັນດານິຕິກຳສາກົນ ທີ່ໄດ້ກຳນົດໄວ້ໃນບັນຊີລາຍຊື່ຂອງຂໍ້ທີ 4;

ຂ.) ມີຄວາມຮູ້ຢ່າງກວ້າງຂວາງ ກ່ຽວກັບຄວາມຕ້ອງການທາງດ້ານການເມືອງ, ກົດໝາຍ ແລະ ເຕັກນິກ ທີ່ຕິດພັນກັບການຈັດຕັ້ງປະຕິບັດບັນດານິຕິກຳສາກົນ ທີ່ໄດ້ກຳນົດໄວ້ໃນບັນຊີລາຍຊື່ຂອງຂໍ້ທີ 4;

ຄ.) ມີປະສົບການຢ່າງກ້ວາງຂວາງໃນການອອກແບບ ແລະ ຈັດຕັ້ງປະຕິບັດແຜນປະຕິບັດງານ ວ່າດ້ວຍການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ;

ງ.) ມີຄວາມເຂົ້າໃຈຢ່າງຖືກຕ້ອງ ກ່ຽວກັບບົດບາດ, ໜ້າທີ່ຄວາມຮັບຜິດຊອບ ແລະ ຄວາມອາດສາມາດຂອງທຸກພາກສ່ວນທີ່ກ່ຽວຂ້ອງ ພາຍໃຕ້ອຳນາດການປົກຄອງຂອງລັດ;

ຈ.) ມີທັກສະທາງດ້ານການສື່ສານ ແລະ ການທູດທີ່ມີຄວາມຈຳເປັນໃນການປຶກສາຫາລື, ສື່ສານ ແລະ ແລກປ່ຽນຂໍ້ມູນກັບທຸກພາກສ່ວນທີ່ກ່ຽວຂ້ອງ; ແລະ

ສ.) ມີທັກສະທາງດ້ານການຂຽນ, ສື່ສານ ແລະ ນຳສະເໜີບົດທີ່ມີຄວາມຈຳເປັນໃນການກະກຽມ ແລະ ນຳສະເໜີຂໍ້ມູນ ແລະ ລົດລາຍງານໃນລະດັບຊາດ, ພາກພື້ນ ແລະ ສາກົນ.

## 6.3 ລາຍລະອຽດໃນການຕິດຕໍ່

### 6.3.1 ແຜນປະຕິບັດງານ ສປຊ ແລະ ນິຕິກຳ ວ່າດ້ວຍການຕິດຕາມກວດກາອາວຸດສາກົນ

ຊື່ ແລະ ລາຍລະອຽດຕິດຕໍ່ຂອງບັນດາຈຸດປະສານງານແຫ່ງຊາດ ທີ່ເຮັດວຽກກ່ຽວກັບ:

ກ.) ແຜນປະຕິບັດງານ ສປຊ (ກວດເບິ່ງ ຂໍ້ທີ 4.2); ແລະ
ຂ.) ນິຕິກຳ ວ່າດ້ວຍການຕິດຕາມກວດກາອາວຸດສາກົນ (ກວດເບິ່ງ ຂໍ້ທີ 4.3).

ຕ້ອງສະໜອງລາຍລະອຽດຕິດຕໍ່ ໃຫ້ຫ້ອງການຂອງອົງການ ສປຊ ເພື່ອຕ້ານຢາເສບຕິດ ແລະ ອາຊະຍາກຳ (UNODA) ແລະ ຕ້ອງໄດ້ມີການປັບປຸງເປັນປົກກະຕິ.

**ໝາຍເຫດ:** ຂໍ້ມູນ ສາມາດສົ່ງເຖິງ: ຫ້ອງການຂອງອົງການ ສປຊ ເພື່ອຕ້ານຢາເສບຕິດ ແລະ ອາຊະຍາກຳ (UNODA), ພະແນກອາວຸດທຳມະດາ, ຢູເອັນ ພລາຊາ, ນິວຢອກ, NY 10017, ສະຫະລັດ ອາເມລິກາ; ຫຼື ສົ່ງທາງອີເມວ: conventionalarms@un.org.

### 6.3.2 ອານຸສັນຍາ ສປຊ ວ່າດ້ວຍອາວຸດປືນ

 © United Nations 2018 – All rights reserved

ຊື່ ແລະ ລາຍລະອຽດຕິດຕໍ່ຂອງບັນດາຈຸດປະສານງານແຫ່ງຊາດ ທີ່ເຮັດວຽກກ່ຽວກັບອານຸສັນຍາ ສປຊ ວ່າດ້ວຍອາວຸດປືນ (ກວດເບິ່ງ ຂໍ້ທີ 4.4) ຕ້ອງໄດ້ສະໜອງໃຫ້ຫ້ອງການຂອງອົງການ ສປຊ ເພື່ອຕ້ານຢາເສບຕິດ ແລະ ອາຊະຍາກຳ (UNODA) ແລະ ຕ້ອງໄດ້ມີການປັບປຸງເປັນປົກກະຕິ.

**ໝາຍເຫດ:** ຂໍ້ມູນສາມາດສົ່ງເຖິງ: ຫ້ອງການຂອງອົງການ ສປຊ ເພື່ອຕ້ານຢາເສບຕິດ ແລະ ອາຊະຍາກຳ (UNODA), ພະແນກອາວຸດທຳມະດາ, ຢູ່ສູນວຽນສາກົນ, ຕູ້ໄປສະນີ: 500, A 1400, ວຽນ, ໂອຕຣິດ.

#### 6.3.3 ສັນຍາ ວ່າດ້ວຍການຄ້າອາວຸດ

ຊື່ ແລະ ລາຍລະອຽດຕິດຕໍ່ຂອງບັນດາຈຸດປະສານງານແຫ່ງຊາດ ທີ່ເຮັດວຽກກ່ຽວກັບສັນຍາ ວ່າດ້ວຍການຄ້າອາວຸດ (ກວດເບິ່ງ ຂໍ້ທີ 4.5) ຕ້ອງໄດ້ສະໜອງໃຫ້ກອງເລຂາຂອງສັນຍາ ວ່າດ້ວຍການຄ້າອາວຸດ ແລະ ຕ້ອງໄດ້ມີການປັບປຸງເປັນປົກກະຕິ.

# 7 ກົນໄກການປະສານງານແຫ່ງຊາດ

## 7.1 ພາກທົ່ວໄປ

ຕ້ອງສ້າງຕັ້ງກົນໄກການປະສານງານແຫ່ງຊາດ - ທີ່ກວມເອົາຄະນະກຳມະການແຫ່ງຊາດ, ຈຸດປະສານງານ ແລະ ບັນດາພາກສ່ວນທີ່ກ່ຽວຂ້ອງອື່ນໆ.

## 7.2 ບົດບາດ

ກົນໄກການປະສານງານ ກ່ຽວກັບອາວຸດຂະໜາດນ້ອຍ ແລະ ເບົາ ຄວນຮັບປະກັນໃຫ້:

ກ). ທຸກພາກສ່ວນທີ່ກ່ຽວຂ້ອງຂອງພາກລັດ ກໍຄືບັນດາຄູ່ຮ່ວມມືທີ່ກ່ຽວຂ້ອງລະດັບຊາດ ແລະ ສາກົນ ມີສ່ວນຮ່ວມໃນການອອກແບບ, ຈັດຕັ້ງປະຕິບັດ, ຕິດຕາມ ແລະ ປະເມີນແຜນປະຕິບັດງານ ວ່າດ້ວຍການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ;

ຂ). ການຈັດຕັ້ງປະຕິບັດຢ່າງເຕັມປ່ຽມທຸກຄວາມໝາຍໝັ້ນຂອງລັດ ຕໍ່ ແຜນປະຕິບັດງານ ສປຊ (ກວດເບິ່ງ ຂໍ້ທີ 4.2), ນິຕິກຳ ວ່າດ້ວຍການຕິດຕາມກວດອາວຸດສາກົນ (ກວດເບິ່ງ ຂໍ້ທີ 4.3) ແລະ ບັນດານິຕິກຳພາກພື້ນ ແລະ ສາກົນອື່ນໆ ທີ່ລັດໄດ້ເຂົ້າເປັນພາຄີ (ກວດເບິ່ງ ຂໍ້ທີ 4.4 ແລະ 4.5).

**ໝາຍເຫດ 1**: ໂດຍມີຂໍ້ຜູກມັດທາງກົດໝາຍ, ບັນດາລັດຢູ່ບາງພາກພື້ນ ເປັນຕົ້ນແມ່ນ: ປະຊາຄົມເສດຖະກິດອາຟຣິກາຕາເວັນຕົກ, the Great Lakes Region and the Horn of Africa, ແລະ ປະຊາຄົມພັດທະນາອາຟຣິກາໃຕ້, ຕ້ອງໄດ້ສ້າງຕັ້ງກົນໄກການປະສານງານ ກ່ຽວກັບອາວຸດຂະໜາດນ້ອຍ ແລະ ເບົາ.

**ໝາຍເຫດ 2**: ເຖິງແມ່ນວ່າ ລະບຽບການ ທີ່ໄດ້ຖືກກຳນົດໄວ້ໃນເອກະສານສະບັບນີ້ ຈະສຸມໃສ່ອາວຸດຂະໜາດນ້ອຍ ແລະ ເບົາ, ແຕ່ບໍ່ໄດ້ໝາຍຄວາມວ່າ ກົນໄກການປະສານງານ ຈະບໍ່ສາມາດຂະຫຍາຍຂອບເຂດ-ບົດບາດ ໃຫ້ກວມເອົາບັນດາອາວຸດຂະໜາດນ້ອຍທີ່ມີຄວາມຮ້າຍແຮງ ຖ້າຖືວ່າມີຄວາມຈຳເປັນໃນການສະກັດກັ້ນ ຫຼື ຫຼຸດຜ່ອນຄວາມຮຸນແຮງຂອງອາວຸດ (ເປັນຕົ້ນແມ່ນ: bladed weapons, hand grenades, improvised explosive devices ແລະ ອື່ນໆ).

## 7.3 ໜ້າທີ່

#### 7.3.1 ພາກທົ່ວໄປ

ກົນໄກການປະສານງານແຫ່ງຊາດ ຄວນປະຕິບັດໜ້າທີ່ທີ່ສຳຄັນ ດັ່ງຕໍ່ໄປນີ້:

#### 7.3.2 ບູລິມະສິດລະດັບສູງ

ກ.) ຕິດຕາມຢ່າງເປັນປົກກະຕິຜົນກະທົບຂອງອາວຸດຂະໜາດນ້ອຍ ແລະ ເບົາ ຕໍ່ລັດ ແລະ ຄວາມໝັ້ນຄົງທາງດ້ານມະນຸດ ກໍຄືຄວາມເປັນຢູ່ທາງດ້ານເສດຖະກິດ ແລະ ສັງຄົມ ພາຍໃຕ້ອຳນາດການປົກຄອງຂອງລັດ.

ການຈັດການປະເມີນຕ່າງໆ ພາຍໃຕ້ຂະບວນການຕິດຕາມ ຕ້ອງອີງໃສ່ການຄົ້ນຄວ້າທີ່ມີຫຼັກຖານອ້າງອີງ ຜ່ານການນຳໃຊ້ວິທີການຄົ້ນຄ້ວາໃນຮູບແບບການສືບສວນ ແລະ ການຄົ້ນຄ້ວາທາງດ້ານວິທະຍາສາດ-ສັງຄົມ, ແລະ ການປະເມີນດັ່ງກ່າວ ຄວນປະກອບມີ

© United Nations 2018 – All rights reserved 

1) ການຄອບຄອງອາວຸດຂອງພາກລັດ, ຊຶ່ງລວມມີ
    - ການຄຸ້ມຄອງ ແລະ ຄວາມປອດໄພດ້ານການສະສົມອາວຸດ, ແລະ
    - ການໂຈລະກຳ ແລະ ສູນຫາຍຂອງອາວຸດຂະໜາດນ້ອຍ ແລະ ເບົາ ຈາກການສະສົມຂອງລັດ,

2) ການຄອບຄອງອາວຸດຂອງພົນລະເຮືອນ, ຊຶ່ງລວມມີ
    - ຈຳນວຍຕົວເລກຂອງທະບຽນການຄອບຄອງອາວຸດຂະໜາດນ້ອຍ (ແຍກຕາມເພດ), ແລະ
    - ການຄາດຄະເນການຄອບຄອງອາວຸດຂະໜາດນ້ອຍ ແລະ ເບົາແບບຜິດກົດໝາຍ (ແຍກຕາມເພດ),

3) ການນຳໃຊ້ອາວຸດຂະໜາດນ້ອຍ ແລະ ເບົາໃນການກໍ່ອາຊະຍາກຳ ແລະ ໃນທາງທີ່ຜິດ, ຊຶ່ງກວມມີ
    - ການຄາດຕະກຳ (ສະຖິຕິ ກ່ຽວກັບຜູ້ກຳທຳຜິດ ແລະ ຜູ້ເຄາະຮ້າຍ ຈຳແນກຕາມເພດ)
    - ການຄ້າຕົວຕາຍ (ຈຳແນກຕາມເພດ), ແລະ
    - ການກະທຳຄວາມຮຸນແຮງທາງເພດ, ການກະທຳຄວາມຮຸນແຮງບົນພື້ນຖານທາງເພດ ແລະ ການກະທຳຄວາມຮຸນແຮງ ໂດຍຄູ່ຮັກ/ຄວາມຮຸນແຮງທາງຄອບຄົວ (ສະຖິຕິ ກ່ຽວກັບຜູ້ກຳທຳຜິດ ແລະ ຜູ້ເຄາະຮ້າຍ ຈຳແນກຕາມເພດ)

4) ຄວາມແຕກຕ່າງ ລະຫວ່າງເພດ ແລະ ອາຍຸ ໃນການນຳໃຊ້ອາວຸດຂະໜາດນ້ອຍ ແລະ ເບົາ;

5) ການຄ້າຂາຍອາວຸດຂະໜາດນ້ອຍ ແລະ ເບົາ ທີ່ຜິດກົດໝາຍ, ຊຶ່ງລວມມີ
    - ຕົວຂັບເຄື່ອນຄວາມຕ້ອງການທີ່ຜິດກົດໝາຍ
    - ກົນໄກການສະໜອງ, ແລະ
    - ເສັ້ນທາງການລັກລອບ

6) ການຜະລິດອາວຸດຂະໜາດນ້ອຍ ແລະ ເບົາ (ລວມທັງສີມືໃນການການຜະລິດ) ແລະ ການຄ້າຂາຍ ພາຍໃນເຂດອຳນາດການປົກຄອງຂອງລັດ ໃນທ່າມກາງສະພາບການທາງວັດທະນາທຳ ແລະ ພາກພື້ນ,

7) ຄວາມຫຼາກຫຼາຍ, ບົດບາດ ແລະ ຜົນກະທົບທີ່ກ້ວາງຂວາງ (ລວມທັງດ້ານເສດຖະກິດ) ຂອງອາວຸດຂະໜາດນ້ອຍ ແລະ ເບົາ ໃນຂົງເຂດການລ່າສັດ ແລະ ຍິງສັດ, ລວມທັງຜົນກະທົບທີ່ຕິດພັນກັບສັດປ່າ ແລະ ການຄຸ້ມຄອງລະບົບນິເວດ;

8) ຈຸດແຂງ, ຈຸດອ່ອນ, ຄວາມແຕກໂຕນ ແລະ ຄວາມບໍ່ມີປະສິດທິພາບຂອງນະໂຍບາຍ, ນິຕິກຳ ແລະ ແຜນປະຕິບັດງານ ເພື່ອຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ;

ຂ.) ກຳນົດເປົ້າໝາຍຂອງການຍົກລະດັບຍຸດທະສາດການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ (ຊຶ່ງອາດກວມເອົາການປັບປຸງ ນະໂຍບາຍ, ນິຕິກຳ ແລະ ກິດຈະກຳຕ່າງໆ) ພາຍໃນເຂດອຳນາດການປົກຄອງຂອງລັດ ໂດຍການປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງ (ກວດເບິ່ງ ຂໍ້ທີ 7.4);

ຄ.) ໂດຍສືບເນື່ອງຈາກເປົ້າໝາຍດັ່ງກ່າວ, ກຳນົດວັດຖຸປະສົງທາງດ້ານຍຸດທະສາດ ແລະ ການປະຕິບັດຂອງການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ ໂດຍໃຫ້ຄຳນຶງເຖິງວັດທະນາທຳ, ເພດ ແລະ ອາຍຸ ແລະ ຜ່ານການປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງ;

ງ.) ກຳນົດ ແລະ ແຕ່ງຕັ້ງບັນດາຂະແໜງການຂອງພາກລັດ (ແລະ ຖ້າມີຄວາມເໝາະສົມ, ກຳນົດ ສປຊ ແລະ ອົງການຈັດຕັ້ງພາກພື້ນ ແລະ ສາກົນ) ເພື່ອເຮັດໜ້າທີ່ໃດໜຶ່ງ ກ່ຽວກັບການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ ເພື່ອຮັບປະກັບແນວທາງການເຮັດວຽກແບບຮອບດ້ານ ແລະ ຫຼີກລ້ຽງການທັບຊ້ອນຂອງບົດບາດໜ້າທີ່;

ຈ.) ອີງຕາມການຈັດຕັ້ງປະຕິບັດການຄຸ້ມຄອງອາວຸດຂະໜາດນ້ອຍ 04.10 (MOSAIC 04.10) - *ການອອກແບບ ແລະ ການຈັດຕັ້ງປະຕິບັດແຜນປະຕິບັດແຫ່ງຊາດ* - ອອກແບບ ແລະ ເຜີຍແຜ່ແຜນປະຕິບັດງານແຫ່ງຊາດ ວ່າດ້ວຍການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ ທີ່ເປັນໄປໄດ້ ແລະ ສາມາດຈັດຕັ້ງປະຕິບັດໄດ້ ແນໃສ່ຕອບສະໜອງວັດຖຸປະສົງທາງດ້ານຍຸດທະສາດ ແລະ ການປະຕິບັດ ໂດຍການປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງ;

ສ.) ປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງ, ລວມທັງໃນລະດັບຂະແໜງການ ແລະ ເມືອງ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ ແລະ ປະສານການຈັດບັນດາກິດຈະກຳທີ່ກ່ຽວຂ້ອງ.


© United Nations 2018 – All rights reserved

### 7.3.3 ບູລິມະສິດລະດັບກາງ

ກ.) ຕິດຕາມກວດກາ ແລະ ຊີ້ນໍາຄວາມພະຍາຍາມໃນການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ ເພື່ອສົ່ງເສີມຂະບວນການຈັດຕັ້ງປະຕິບັດ ແລະ ຂ້າມຜ່ານສິ່ງກີດຂວາງຕ່າງໆ ແນໃສ່ຮັບປະກັນການປະຕິບັດວຽກງານທີ່ດີ

ຂ.) ປຶກສາຫາລືກັບ ແລະ ສະໜອງຂໍ້ມູນໃຫ້ແກ່ອົງການນິຕິບັນຍັດແຫ່ງຊາດ ກ່ຽວກັບການຈັດຕັ້ງປະຕິບັດການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ ແລະ ຜົນກະທົບຕ່າງໆຕໍ່ຂໍ້ທີ 7.3.2.a;

ຄ.) ຮັບປະກັນຄວາມເຂົ້າໃຈຮ່ວມກັນ ລະຫວ່າງບັນດາຂະແໜງການຂອງພາກລັດທີ່ກ່ຽວຂ້ອງ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນໆ ກ່ຽວກັບພາລະ-ບົດບາດ ແລະ ຄວາມຮັບຜິດຊອບທີ່ຕິດພັນກັບການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາໃນລະດັບຊາດ;

ງ.) ສ້າງຕັ້ງສາຍການສື່ສານແບບສອງທາງ ລະຫວ່າງ ຂະແໜງການຂອງພາກລັດ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນໆ;

ຈ.) ເຜີຍແຜ່ຂໍ້ມູນທີ່ເໝາະສົມ ແລະ ຢ່າງທັນການໃຫ້ແກ່ທຸກພາກສ່ວນທີ່ກ່ຽວຂ້ອງ ແລະ ສື່ມວນຊົນ ໃນການສະໜັບສະໜູນການຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ ວ່າດ້ວຍການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ, ລວມທັງຜົນຂອງການຄົ້ນຄ້ວາ ກ່ຽວກັບຜົນກະທົບຂອງອາວຸດຂະໜາດນ້ອຍ ແລະ ເບົາ ຕໍ່ລັດ ແລະ ຄວາມໝັ້ນຄົງທາງດ້ານມະນຸດ ແລະ ການເປັນຢູ່ທາງດ້ານເສດຖະກິດ ແລະ ສັງຄົມ;

ສ.) ຕິດຕາມ ຫຼື ຮັບປະກັນການຕິດຕາມການຈັດຕັ້ງປະຕິບັດຍຸດທະສາດການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາທຸກຮູບແບບໃນການສະໜັບສະໜູນແຜນປະຕິບັດງານແຫ່ງຊາດ ເພື່ອຮັບປະກັນການດໍາເນີນການຈັດຕັ້ງປະຕິບັດ ໃຫ້ໄດ້ຕາມແຜນ;

ຊ.) ປະເມີນຍຸດທະສາດການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາທຸກຮູບແບບ ເພື່ອເປັນການສະໜັບສະໜູນແຜນປະຕິບັດງານແຫ່ງຊາດ ເພື່ອໃຫ້ສາມາດກໍານົດຜົນກະທົບຕົວຈິງຂອງການຈັດຕັ້ງປະຕິບັດ, ລວມທັງການປ່ຽນແປງຂອງສັດສ່ວນທາງເພດ ແລະ ອາຍຸ , ຊຶ່ງຕິດພັນກັບການຄອບຄອງ, ການນໍາໃຊ້, ການນໍາໃຊ້ອາວຸດຂະໜາດນ້ອນ ແລະ ເບົາ ທີ່ຜິດກົດໝາຍ ແລະ ການຕົກເປັນຜູ້ເຄາະຮ້າຍ;

ຍ.) ປັບປຸງແຜນປະຕິບັດງານແຫ່ງຊາດ ຫຼື ຍຸດທະສາດ ໃນເວລາທີ່ເໝາະ ເພື່ອຮັບມືກັບການປ່ຽນແປງຂອງເງື່ອນໄຂການປະຕິບັດງານ ກໍຄືຜົນຈາກການຄົ້ນຄ້ວາ ແລະ ການປະເມີນ;

### 7.3.4 ບູລິມະສິດລະດັບຕໍ່າ

ກ.) ສ້າງຕັ້ງລະບົບ/ກົນໄກການສື່ສານທີ່ມີປະສິດທິພາບ ແລະ ລະບົບເຕັກນິກໃນການສະໜັບສະໜູນການຄຸ້ມອາວຸດຂະໜາດນ້ອຍ ແລະ ເບົາ ກັບລັດຢູ່ປະເທດໃກ້ຄຽງ *ຖ້າມີຄວາມເໝາະ;*

ຂ.) ຕິດຕາມກວດກາການລາຍງານແຫ່ງຊາດ ກ່ຽວກັບມາດຕະການການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ ຕໍ່ສະຫະປະຊາຊາດ (ສປຊ) ແລະ ອົງການຈັດຕັ້ງພາກພື້ນ ແລະ ອະນຸພາກພື້ນທີ່ກ່ຽວຂ້ອງ (ກວດເບິ່ງ MOSAIC 04.10, *ການຕິດຕາມ, ການປະເມີນ ແລະ ການລາຍງານ* ເພື່ອຂໍ້ແນະນໍາເພີ່ມເຕີມ;)

ຄ.) ຢັ້ງຢືນວ່າມີມາດຕະການການຄຸ້ມຄອງແຫ່ງຊາດ ທີ່ມີປະສິດທິພາບ ໃນການຄຸ້ມຄອງການນໍາເຂົ້າ, ການຂົນສົ່ງຜ່ານ, ການຄ້າຮູບຖ່າຍ ແລະ ນາຍໜ້າຄ້າຂາຍອາວຸດຂະໜາດນ້ອຍ ແລະ ເບົາ ໂດຍສອດຄ່ອງກັບ MOSAIC 03.20, *ການຄຸ້ມຄອງການຂົນສົ່ງອາວຸດຂະໜາດນ້ອຍ ແລະ ເບົາແຫ່ງຊາດ;*

ງ.) ສະໜອງຂໍ້ມູນ (ລວມທັງບົດລາຍງານ) ຖ້າມີຄວາມຈໍາເປັນ ໃຫ້ແກ່ສະຖາບັນພາກພື້ນ ແລະ ສາກົນ ກ່ຽວກັບການຈັດຕັ້ງບັນດາກິດຈະກໍາໃນການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ ທີ່ຢູ່ພາຍໃຕ້ການຕິດຕາມກວດກາຂອງກົນໄກການປະສານງານລະດັບຊາດ;

© United Nations 2018 – All rights reserved

## 7.4 ໂຄງສ້າງ/ອົງປະກອບຄະນະປະກອບກົນໄກການປະສານງານແຫ່ງຊາດ

### 7.4.1 ພາກທົ່ວໄປ

ກົນໄກການປະສານງານແຫ່ງຊາດ ຄວນປະກອບມີບັນດາຂະແໜງການຂອງພາກລັດ ແລະ ຂະແໜງການທີ່ບໍ່ແມ່ນຂອງພາກລັດ ທີ່ມີໜ້າທີ່ຮັບຜິດຊອບບັນຫາ-ຂົງເຂດທີ່ຕິດພັນກັບວຽກງານການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ.

ກົນໄກການປະສານງານແຫ່ງຊາດ ຄວນມີໂຄງສ້າງທີ່ຄວາມສົມດຸນທາງເພດ.

### 7.4.2 ຂະແໜງການຂອງພາກລັດ

ບັນດາກະຊວງຕ່າງໆ ທີ່ເຮັດວຽກກ່ຽວກັບບັນຫາດັ່ງຕໍ່ໄປນີ້ ຄວນເອົາປະກອບເຂົ້າໃນໂຄງສ້າງຂອງກົນໄກການປະສານງານແຫ່ງຊາດ:

**ໝາຍເຫດ:** ບັນຊີລຸ່ມນີ້ ບໍ່ແມ່ນບັນຊີທີ່ລະອຽດທີ່ສຸດ. ບັນດາກະຊວງຕ່າງໆ ທີ່ມີໜ້າທີ່ຮັບຜິດຊອບບັນຫາ-ຂົງເຂດອື່ນໆ ທີ່ຕິດພັນກັບວຽກງານການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ ບໍ່ວ່າຈະທາງກົງ ຫຼື ທາງອ້ອມ ກໍອາດສາມາດເອົາປະກອບເຂົ້າໃນກົນໄກກາປະສານງານລະດັບຊາດ.

ກ.) ເດັກນ້ອຍ;

ຂ.) ປ້ອງກັນປະເທດ;

ຄ.) ການສຶກສາ;

ງ). ການເງິນ / ເສດຖະກິດ / ພາສີ;

ຈ.) ວຽກງານການຕ່າງປະເທດ;

ສ.) ສາທາລະນະສຸກ;

ຊ.) ສືບຂ່າວ;

ຍ.) ວຽກງານພາຍໃນ / ຕຳຫຼວດ;

ດ.) ຍຸຕິທຳ / ກົດໝາຍ;

ຕ.) ລັດຖະບານທ້ອງຖິ່ນ;

ຖ.) ສະຫວັດດີການສັງຄົມ;

ທ.) ຂົນສົ່ງ (ທາງອາກາດ, ລົດໄຟ, ທາງບົກ ແລະ ເຈົ້າໜ້າທີ່ປະຈຳຢູ່ທ່າເຮືອ)

ນ.) ແມ່ຍິງ ແລະ ຄວາມເໝີພາບຍິງ-ຊາຍ;

ບ.) ຊາວໜຸ່ມ;

ຜ.) ການຄ້າ ແລະ ອຸດສາຫະກຳ;

ພ.) ກິລາ (ຖ້າກວມເອົາກິລາຍິງປືນ);

ຟ.) ກະສິກຳ / ສັດປ່າ / ສິ່ງແວດລ້ອມ; ແລະ

ມ.) ວັດທະນາທຳ / ມໍລະດົກ.


© United Nations 2018 – All rights reserved

ນອກຈາກນັ້ນ, ຖ້າຫາກມີ, ບັນດາຂະແໜງການພາກຂອງລັດລຸ່ມນີ້ ກໍຄວນເອົາປະກອບເຂົ້າໃນກົນໄກການປະສານງານແຫ່ງຊາດ:

ຍ.) ປະສານງານແຫ່ງຊາດ ວ່າດ້ວຍອາວຸດຂະໜາດນ້ອຍ ແລະ ເບົາ (ກວດເບິ່ງ ຂໍ້ທີ 6);

ລ.) ອົງການນິຕິບັນຍັດແຫ່ງຊາດ;

ວ.) ຫ້ອງວ່າການ ສຳນັກງານປະທານປະເທດ / ນາຍົກລັດຖະມົນຕີ; ແລະ

ຫ.) ຕົວແທນ/ສົ່ງອອກ/ນຳເຂົ້າອາວຸດ;

#### 7.4.3 ອົງການຈັດຕັ້ງທາງສັງຄົມ

ຜູ້ຕາງໜ້າຈາກອົງການຈັດຕັ້ງທາງສັງຄົມ ຄວນເອົາປະກອບເຂົ້າໃນກົນໄກການປະສານງານແຫ່ງຊາດ

**ຕົວຢ່າງ:** ອົງການຈັດຕັ້ງທາງສັງຄົມ ອາດປະກອບມີອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານທີ່ກ່ຽວຂ້ອງ, ສະຖາບັນການຄົ້ນຄ້ວາ, ອົງການແມ່ຍິງ, ສະມາຄົມລ່າສັດ ແລະ ກິລາຍິງປືນ, ອົງການສື່ສານ, ກຸ່ມການເມືອງ, ຊາວໜຸ່ມ, ສະຫະພັນເດັກນ້ອຍ, ເຄືອຂ່າຍປົກປ້ອງຊຸມຊົນ, ສະມາຄົມຄົນພິການ, ຄັງປັນຍາ ແລະ ອົງການຈັດຕັ້ງທາງສາສະໜາ.

#### 7.4.4 ອຸດສາຫະກຳ

ຜູ້ຜະລິດ ແລະ ສະມາຄົມການຜະລິດອາວຸດຂະໜາດນ້ອຍ ແລະ ເບົາທີ່ຖືກກົດໝາຍ ກໍຄືຜູ້ອຳນວຍໃຫ້ຫ້ແກ່ການຄ້າຂາຍອາວຸດຂະໜາດນ້ອຍ ແລະ ເບົາທີ່ຖືກກົດໝາຍ (ນາຍໜ້າ, ຕົວແທນຈຳໜ່າຍ ແລະ ອື່ນໆ) ຄວນເອົາປະກອບເຂົ້າໃນກົນໄກການປະສານງານແຫ່ງຊາດ.

#### 7.4.5 ບັນດາອົງການເຄືອຂ່າຍສາກົນ

ບັນດາອົງການເຄືອຂ່າຍອົງການສະຫະປະຊາຊາດ (ສປຊ), ອົງການຈັດຕັ້ງສາກົນ, ພາກພື້ນ ແລະ ອະນຸພາກພື້ນ ທີ່ໃຫ້ຄຳແນະນຳ ແລະ ການສະໜັບສະໜູນ ແກ່ລັດຖະບານ ໃນຂົງເຂດການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ ຄວນເອົາປະກອບເຂົ້າໃນກົນໄກການປະສານງານແຫ່ງຊາດ. ບັນດາຂະແໜງການດັ່ງກ່າວ ອາດເຂົ້າຮ່ວມ ໃນຖານະເປັນສະມາຊິກສົມບູນ ຫຼື ສັງເກດການ.

## 8 ໂຄງຮ່າງ ແລະ ການບໍລິຫານຈັດການ

ເພື່ອຮັບປະກັນການດຳເນີນງານຢ່າງມີປະສິດທິພາບ ແລະ ປະສິດທິຜົນ, ກົນໄກການໄປສານງານແຫ່ງຊາດ ຄວນມີຊັບພະຍາກອນຕ່າງໆດັ່ງຕໍ່ໄປນີ້:

ກ.) ພະນັກງານຊ່ວຍວຽກ ທີ່ມີຄວາມຮູ້ ແລະ ຄວາມອາດສາມາດໃນການປະຕິບັດໜ້າທີ່;

ຂ.) ພື້ນທີ່ ແລະ ສະຖານທີທີ່ເໝາະສົມແກ່ການຈັດກອງປະຊຸມຕ່າງໆ;

ຄ.) ພື້ນທີ່ ແລະ ອຸປະກອນເຮັດວຽກທີ່ເໝາະສົມ ເພື່ອອຳນວຍໃຫ້ພະນັກງານຊ່ວຍວຽກ ສາມາດປະຕິບັດໜ້າທີ່ຢ່າງມີປະສິດທິພາບ (ເຊັ່ນ: ໂຕະ, ຕັ່ງ, ຄອມພິວເຕີ, ອຸປະກອນການສື່ສານ, ອິນເຕີເນັດ ແລະ ອື່ນໆ); ແລະ

ງ.) ຊັບພະຍາກອນທາງການເງິນທີ່ພຽງພໍ ເພື່ອໃຫ້ສາມາດຈ່າຍເງິນເດືອນພະນັກງານຊ່ວຍວຽກ, ຄ່າເດີນທາງ (ຖ້າມີຄວາມຈຳເປັນ), ຄ່າໃຊ້ ຈ່າຍຕ່າງໆໃນການຈັດກອງປະຊຸມຂອງກົນໄກການປະສານງານແຫ່ງຊາດ ແລະ ການບໍລິຫານຫ້ອງການ.

ຄະນະກຳມະການແຫ່ງຊາດ ອາດສະໜອງຊັບພະຍາກອນດັ່ງກ່າວຂ້າງເທິງ (ກວດເບິ່ງ ຂໍ້ທີ 5).

## 9 ຂົງເຂດໜ້າທີ່ຄວາມຮັບຜິດຊອບຂອງພາກລັດ

ກົນໄກການປະສານງານແຫ່ງຊາດ ຮັບຜິດຊອບ ກ່ຽວກັບການປະສານບັນດາກິດຈະກຳຕ່າງໆທີ່ກ່ຽວຂ້ອງກັບການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ. ຢ່າງໃດກໍຕາມ, ບັນດາກະຊວງ, ກົມ, ຂະແໜງການ ແລະ ອື່ນໆ ແມ່ນຕ້ອງໄດ້ຈັດຕັ້ງປະຕິບັດບັນດາກິດຈະກຳເຫຼົ່ານັ້ນ.

© United Nations 2018 – All rights reserved

ຂົງເຂດໜ້າທີ່ຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດບັນດາກິດຈະກຳການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ ສາມາດຈັດແບ່ງໃຫ້ບັນດາຂະແໜງການຂອງພາກລັດ ຕາມຕາຕະລາງ 01.

## ຕາຕະລາງ 1 – ໜ້າທີ່ຮັບຜິດຊອບຂອງຂະແໜງການຂອງພາກລັດ

| ຂົງເຂດວຽກງານໃນການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ | ຂະແໜງການຂອງພາກລັດທີ່ກ່ຽວຂ້ອງ ແມ່ນບັນດາຂະແໜງການທີ່ຮັບຜິດຊອບວຽກງານ: |
|---|---|
| ການຄຸ້ມຄອງຂ້າມແດນ | ພາຍໃນ/ປ້ອງກັນຄວາມສະຫງົບ/ຕຳຫຼວດ<br>ປ້ອງກັນປະເທດ<br>ພາສີ<br>ການຕ່າງປະເທດ |
| ຜົນກະທົບດ້ານສາທາລະນະສຸກ ແລະ ສະຫວັດດີການສັງຄົມ | ສາທາລະນະສຸກ<br>ສະຫວັດດີການສັງຄົທ<br>ແມ່ຍິງ ແລະ ສິດສະເໝີພາບຍິງ-ຊາຍ<br>ສັດປ່າ/ສິ່ງແວດລ້ອມ |
| ການຄຸ້ມຄອງຂໍ້ມູນຂ່າວສານ | ພາຍໃນ/ຄວາມສະຫງົບ/ຕຳຫຼວດ<br>ການສືບຂ່າວ |
| ນະໂຍບາຍ ແລະ ນິຕິກຳ | ອົງການນິຕິບັນຍັດແຫ່ງຊາດ<br>ພາຍໃນ/ປ້ອງກັນຄວາມສະຫງົບ/ຕຳຫຼວດ<br>ຍຸຕິທຳ<br>ແມ່ຍິງ ແລະ ສິດສະເໝີພາບຍິງ-ຊາຍ<br>ການປົກປ້ອງເດັກ/ສິດຂອງເດັກ<br>ພາສີ |
| ການສົ່ງເສີມຄວາມເຂົ້າໃຈ ແລະ ການສື່ສານ | ພາຍໃນ/ປ້ອງກັນຄວາມສະຫງົບ/ຕຳຫຼວດ<br>ການສື່ສານ<br>ສາທາລະນະສຸກ<br>ສະຫວັດດີການສັງຄົມ<br>ການສຶກສາ<br>ແມ່ຍິງ ແລະ ສິດສະເໝີພາບຍິງ-ຊາຍ<br>ຊາວໜຸ່ມ<br>ສັດປ່າ/ສິ່ງແວດລ້ອມ |
| ການນຳເຂົ້າ-ສົ່ງອອກ ແລະ ນາຍຈ້າງ | ການຕ່າງປະເທດ<br>ປ້ອງກັນປະເທດ<br>ພາຍໃນ/ປ້ອງກັນຄວາມສະຫງົບ/ຕຳຫຼວດ<br>ພາສີ<br>ໃບອະນຸຍາດການນຳເຂົ້າ/ສົ່ງອອກ |
| ເຄື່ອງໝາຍ, ການບັນທຶກ ແລະ ການຕິດຕາມກວດກາ | ພາຍໃນ/ປ້ອງກັນຄວາມສະຫງົບ/ຕຳຫຼວດ<br>ປ້ອງກັນປະເທດ |
| ການເກັບກຳ | ພາຍໃນ/ປ້ອງກັນຄວາມສະຫງົບ/ຕຳຫຼວດ<br>ປ້ອງກັນປະເທດ<br>ລັດຖະບານທ້ອງຖິ່ນ<br>ແມ່ຍິງ ແລະ ສິດສະເໝີພາບຍິງ-ຊາຍ<br>ຊາວໜຸ່ມ |
| ການທຳລາຍ | ພາຍໃນ/ປ້ອງກັນຄວາມສະຫງົບ/ຕຳຫຼວດ<br>ປ້ອງກັນປະເທດ |
| ການຄຸ້ມມຄອງການສະສົມ | ປ້ອງກັນປະເທດ<br>ພາຍໃນ/ປ້ອງກັນຄວາມສະຫງົບ/ຕຳຫຼວດ |


© United Nations 2018 – All rights reserved

## *10* ແຜນປະຕິບັດງານແຫ່ງຊາດ ແລະ ຂະບວນການຕ່າງໆທີ່ກ່ຽວຂ້ອງບໍໄກການປະສານງານແຫ່ງຊາດ ຄວນສ້າງແຜນ

ປະຕິບັດງານແຫ່ງຊາດ ເພື່ອຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ ໂດຍສອດຄ່ອງກັບ **MOSAIC 04.10,** *ການອອກແບບ ແລະ ການຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ*

ກົນໄກການປະສານງານແຫ່ງຊາດ ຄວນປະກອບສ່ວນເຂົ້າໃນການອອກແບບ ແລະ ການຈັດຕັ້ງປະຕິບັດບັນດາຂໍ້ລິເລີ່ມ ກ່ຽວກັບການສົ່ງເສີມຄວາມປອດໄພທາງຊຸມຊົນ ແລະ ຄວາມເຂົ້າໃຈ ໂດຍອີງຕາມ MOSAIC 04.20, *ການອອກແບບ ແລະ ການຈັດຕັ້ງປະຕິບັດໂຄງການຄວາມປອດໄພທາງຊຸມຊົນ,* ແລະ MOSAIC 04.30, *ການສົ່ງເສີມຄວາມເຂົ້າໃຈ ກ່ຽວກັບຄວາມຈຳເປັນໃນການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ.*

## 11 ບົດບາດພິເສດ ຂອງ ອົງການຈັດຕັ້ງພາກພື້ນ ແລະ ສະຫະປະຊາຊາດ (ສປຊ)

ໃນບາງຊ່ວງ ແລະ ບາງຂົງເຂດທາງດ້ານພູມສາດ (ເຊັ່ນ: ຂົງເຂດ ທີ່ຫຼຸດພົ້ນອອກຈາກການຂັດແຍ່ງທາງດ້ານອາວຸດ, ຊຶ່ງອາດສົ່ງຜົນຕໍ່ຄວາມອາດສາມາດຂອງລັດຖະບານ ໃນການຊີ້ນຳ-ນຳພາ), ບັນດາລັດດັ່ງກ່າວ ອາດຕົກລົງມອບໝາຍພັນທະ-ໜ້າທີ່ ໃຫ້ແກ່ອົງການຈັດຕັ້ງພາກພື້ນ ຫຼື ອົງການສະຫະປະຊາຊາດ (ສປຊ) ເພື່ອປະສານງານ ແລະ ສະໜັບສະໜູນຄວາມພະຍາຍາມໃນການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ.

ໃນສະພາບການດັ່ງກ່າວ, ອົງການຈັດຕັ້ງພາກພື້ນ ຫຼື ອົງການເຄືອຂ່າຍອົງການສະຫະປະຊາຊາດ (ສປຊ) ທີ່ກ່ຽວນ້ອງ ຄວນເຮັດບາງ ແລະ ທຸກໜ້າທີ່ຮັບຜິດຊອບຂອງຄະນະກຳມະການແຫ່ງຊາດ, ແລະ ອາດຫຼິ້ນບົດບາດເປັນຂົວຕໍ່ປະສານງານກັບແຫຼ່ງສະໜອງທຶນຮອນ. ບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງອົງການຈັດຕັ້ງພາກພື້ນ ແລະ ອົງການສະຫະປະຊາຊາດ (ສປຊ) ອາດແຕກຕ່າງກັນ ລະຫວ່າງລັດຕ່າງໆ ແລະ ອາດຂຶ້ນກັບການຕົກລົງເຫັນດີສະເພາະດ້ານ.

ອົງການຈັດຕັ້ງພາກພື້ນທີ່ກ່ຽວຂ້ອງ ຫຼື ອົງການສະຫະປະຊາຊາດ (ສປຊ) ຄວນໃຫ້ການສະໜັບສະໜູນໃນການຍົກລະດັບຄວາມອາດສາມາດ ແລະ ທາງການເຕັກນິກທີ່ຈຳເປັນ ໃຫ້ແກ່ລັດຖະບານທີ່ຍັງບໍ່ມີຄວາມອາດສາມາດ ແລະ ຂາດເຂີນຊັບພະຍາກອນ ແລະ ຄວາມຊ່ຽວຊານ ໃນການຈັດຕັ້ງປະຕິບັດການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ ໂດຍແນໃສ່ສົ່ງເສີມການສ້າງຕັ້ງກົນໄກການປະສານງານແຫ່ງຊາດທີ່ເປັນເອກະລາດ ແລະ ມີປະສິດທິພາບ.

© United Nations 2018 – All rights reserved

# ເອກະສານອ້າງອີງ


## United Nations

1. UN. IDDRS 4.11, *SALW Control, Security and Development*. Integrated Disarmament, Demobilization and Reintegration Standards, 2006.

2. UN. *International Instrument to Enable States to Identify and Trace, in a Timely and Reliable Manner, Illicit Small Arms and Light Weapons*, 2005.

3. UN. *Programme of Action to Prevent, Combat and Eradicate the Illicit Trade in Small Arms and Light Weapons in All Its Aspects*, 2001.

4. UN. *Protocol against the Illicit Manufacturing of and Trafficking in Firearms, Their Parts and Components and Ammunition, supplementing the United Nations Convention against Transnational Organized Crime*, 2000.

5. UNDP. *How to Guide: The Establishment and Functioning of National Small Arms and Light Weapons Commissions*. Geneva: United Nations Development Programme, 2008.

## Regional Organizations

6. CICAD. *Model Regulations for the Control of the International Movement of Firearms, Their Parts, Components and Ammunition*. Inter-American Drug Abuse Control Commission (CICAD), 1997.

7. CIFTA. *Inter-American Convention Against the Illicit Manufacturing of and Trafficking in Firearms, Explosives and other related materials*, 1997.

8. ECOWAS Convention on Small Arms and Light Weapons, their Ammunition and Other Related Materials, 2006.

9. FATF. *AML/CFT Evaluations and Assessments: Handbook for Countries and Assessors*. Paris: Financial Action Task Force (FATF)/OECD, 2006.

10. FATF. *International Best Practices – Freezing of Terrorist Assets*. Paris: Financial Action Task Force (FATF)/OECD, 2009.

11. *Nairobi Protocol for the Prevention, Control and Reduction of Small Arms and Light Weapons in the Great Lakes Region and Horn of Africa*, 2004.

12. OSCE. *Document on Small Arms and Light Weapons*. Organization for Security and Co-operation in Europe, 2000.

13. SADC. *Protocol on the Control of Firearms, Ammunition and Other Related Materials*. Southern African Development Community, 2001.

14. SEESAC. RMDS/G 03.10, *SALW National Commissions*. 4th ed. South Eastern and Eastern Europe Clearinghouse for the Control of Small Arms and Light Weapons (SEESAC), 2006.

## Additional sources

15. BICC. *TRESA Project: Civil Society Action on SALW Control*. Bonn: Bonn International Centre for Conversion, 2005.

16. BICC. *TRESA Project: SALW and Development*. Bonn: Bonn International Centre for Conversion, 2006.

17. KYTÖMÄKI, E. and YANKEY-WAYNE, V. *Five Years of Implementing the United Nations Programme of Action on Small Arms and Light Weapons: Regional Analysis of National Reports*. Geneva: UNIDIR, 2006.

18. SAFERAFRICA and SAFERWORLD. Institutional Frameworks: The Functioning of the National Focal Point and Provincial and District level Task Forces on SALW. *Reference and Operations Manual for National Focal Points on SALW*. Pretoria: SaferAfrica and Saferworld, 2006.

19. SAFERWORLD and SEESAC. *Reporting on Small Arms and Light Weapons (SALW) – A Resource Pack for Journalists*, 2004

© United Nations 2018 – All rights reserved